multicultural communication

NSW HEALTH

Lao
September 2005
[DOH-6970]

# ໂຣກໄຂ້ຫວັດນົກ

## Avian Influenza (“Bird Flu”)

**ສະບັບວັນທີ:** 9 ກັນຍາ 2005

ບັນດາຜູ້ຊ່ຽວຊານດ້ານໂຣກໄຂ້ຫວັດມີຄວາມກັງວົນຢ້ານວ່າໂຣກ H5N1 ທີ່ລະບາດກັບນົກເມື່ອບໍ່ດົນມານີ້ ອາດເກີດການປ່ຽນແປງກາຍເປັນໂຣກໄວຣັສຈຳພວກໄຂ້ຫວັດຊະນິດໃໝ່ຂຶ້ນ. ຖ້າເປັນດັ່ງນັ້ນ ອາດເຮັດໃຫ້ ເກີດການລະບາດຂອງໂຣກໄຂ້ຫວັດແຜ່ໄປທົ່ວໂລກຢ່າງກວ້າງຂວາງ. ຮອດປັດຈຸບັນຍັງບໍ່ທັນມີກໍຣະນີ ສົງສັຍ ຫຼືຢັ້ງຢືນວ່າມີໄຂ້ຫວັດນີ້ໃນ ອອສເຕຣເລັຍ.

### ໄຂ້ຫວັດນົກແມ່ນຫຍັງ?

**ໄຂ້ຫວັດນົກແມ່ນພຍາດຕິດຕໍ່ຊະນິດນຶ່ງຂອງນົກ. ຕາມປົກກະຕິ ເຊື້ອໂຣກໄວຣັສຈະຕິດຕໍ່ແຜ່ພາຍກັນ ໃນ ລະຫວ່າງ ຝູງນົກປ່າ ແລະບໍ່ກໍ່ໃຫ້ເກີດພຍາດໃດໆຫຼືຈະມີກໍພຽງແຕ່ພຍາດທີ່ບໍ່ຮ້າຍແຮງ. ການຕິດເຊື້ອໃນກຸ່ມ ສັດປີກລ້ຽງ, ເຊັ່ນໄກ່, ອາດກໍ່ໃຫ້ເກີດພຍາດຢ່າງຮ້າຍແຮງໃນກຸ່ມສັດປີກເຫຼົ່ານີ້. ພຍາດໄຂ້ຫວັດນົກມີຫຼາຍ ຊະນິດ ດ້ວຍກັນ, ແຕ່ວ່າມີພຽງສອງສາມຊະນິດເທົ່ານັ້ນທີ່ເຮັດໃຫ້ເກີດເປັນພຍາດຂຶ້ນໄດ້ກັບມະນຸດ.**

ໂຣກໄຂ້ຫວັດນົກຊະນິດໃໝ່ຊະນິດນຶ່ງ, ຊຶ່ງເອີ້ນວ່າ ໄຂ້ຫວັດປະເພດ A H5N1, ໄດຖືກຄົ້ນພົບເປັນຄັ້ງທຳອິດໃນປີ 1997 ທີ່ປະເທດຮົ່ງກົງ. ພຍາດຊຸມນີ້ໄດ້ກັບຄືນມາອີກເມື່ອທ້າຍປີ 2003 ແລະໄດ້ແຜ່ຂຍາຍຢ່າງໄວ ໄປ ສູ່ຫຼາຍປະເທດໃນເອເຊັຍ ຊຶ່ງເຮັດໃຫ້ເກີດການຕິດເຊື້ອຢ່າງຮ້າຍແຮງໃນຝູງສັດປີກລ້ຽງຫຼາຍແຫ່ງ. ປັດຈຸບັນ ຍັງບໍ່ມີຫຼັກຖານຊີ້ໃຫ້ເຫັນວ່າໄດ້ມີການຕິດເຊື້ອໄຂ້ຫວັດນົກໃນຝູງນົກໃນອອສເຕຣເລັຍ.

ໄວຣັສຊະນິດນີ້ໄດ້ແຜ່ເຊື້ອໄປຫາຄົນທີ່ໃກ້ຊິດກັບສັດປີກທີ່ເຈັບປ່ວຍຫຼືອາຈົມຂອງສັດເຫຼົ່ານັ້ນ. ນັບແຕ່ ວັນທີ 28 ເດືອນທັນວາ ປີ 2003 ເປັນຕົ້ນມາ, ໄດ້ມີກວ່າ 110 ກໍຣະນີ ຊຶ່ງໄດ້ມີລາຍງານຢັ້ງຢືນວ່າ ແມ່ນກໍຣະນີຂອງ ໄຂ້ຫວັດນົກ ທີ່ເກີດຂຶ້ນກັບຄົນ ໃນປະເທດໄທ, ວຽດນາມ, ກຳປູເຈັຍ ແລະ ອິນໂດນີເຊັຍ, ແລະຫຼາຍຄົນ ທີ່ເປັນ ໄຂ້ຫວັດນົກໄດ້ເສັຍຊີວິດ.

ຮອດປັດຈຸບັນນີ້, ຄົນທີ່ຕິດເຊື້ອ A H5N1 ບໍ່ປາກົດວ່າສາມາດແຜ່ເຊື້ອໃຫ້ຄົນອື່ນໄດ້ໂດຍງ່າຍ. ການຢູ່ໃກ້ຊິດ ກັບສັດທີ່ຕິດເຊື້ອຫຼືອາຈົມຂອງສັດເຫຼົ່ານັ້ນ (ຫຼືຂີ້ຝຸ່ນ ຫຼື ຂີ້ດິນທີ່ມີເຊື້ອໂຣກຈາກອາຈົມຂອງສັດປີກ) ອາດເຮັດ ໃຫ້ເກີດການຕິດເຊື້ອຂຶ້ນກັບຄົນໄດ້. ການກິນອາຫານທີ່ຜລິດຈາກສັດປີກທີ່ປຸງຈົນສຸກດີຫຼືໄຂ່ໄກ່ທີ່ປຸງສຸກແລ້ວ ຈະບໍ່ເປັນສາເຫດເຮັດໃຫ້ເກີດຕິດເຊື້ອ.

ການລະບາດຂອງໂຣກ (epidemic) ທີ່ເກີດຂຶ້ນທົ່ວໂລກແລະເປັນກັນແຜ່ຫຼາຍ ເອີ້ນວ່າ ການລະບາດຂອງ ໂຣກຢ່າງກວ້າງຂວາງຮ້າຍແຮງ (pandemic). ການລະບາດຢ່າງກວ້າງຂວາງຮ້າຍແຮງສາມາດອຸບັດຂຶ້ນໄດ້

ເມື່ອມີເຊື້ອໄວຣັສຊນິດໃໝ່ເກີດຂຶ້ນ ໃນຂນະທີ່ມະນຸດຍັງມີພູມຕ້ານທານຕ່ຳ ຕໍ່ພຍາດຊນິດນັ້ນ ຫຼື ຍັງບໍ່ມີເລີຍ. ໂຣກຫວັດທີ່ລະບາດຢ່າງຮ້າຍແຮງເຄີຍເກີດຂຶ້ນມາກ່ອນໃນປີ 1918-19, 1957-58 ແລະ 1968-69. ເມື່ອໂຣກລະບາດຮ້າຍແຮງເກີດຂຶ້ນໃນປີ 1918-19, ໄດ້ມີຄົນຕາຍເປັນຈຳນວນ ລະຫວ່າງ 20 ຫາ 40 ລ້ານຄົນ. ນັກວິທຍາສາດຫຼາຍທ່ານມີຄວາມກັງວົນຢ້ານວ່າ ເຊື້ອໂຣກ H5N1ທີ່ລະບາດຂຶ້ນໃນຝູງນົກເມື່ອບໍ່ດົນມາ ນີ້ ອາດເກີດການປ່ຽນແປງກາຍເປັນເຊື້ອໄວຣັສໄຂ້ຫວັດຊນິດໃໝ່ທີ່ແຜ່ພາຍຢ່າງງ່າຍດາຍລະຫວ່າງຄົນ, ຊຶ່ງຈະເປັນຜົນໃຫ້ເກີດການລະບາດ ຂອງເຊື້ອໂຣກ ຢ່າງກວ້າງຂວາງແລະຮ້າຍແຮງ.

## ອາການຂອງໂຣກນີ້ມີຫຍັງແດ່?

ໄຂ້ຫວັດນົກຊນິດຕ່າງໆ ອາດເຮັດໃຫ້ເກີດອາການແຕກຕ່າງກັນໄປເມື່ອເກີດຂຶ້ນກັບຄົນ. ໄຂ້ຫວັດນົກທຸກຊນິດ ສາມາດເຮັດໃຫ້ເກີດອາການທີ່ຄ້າຍຄືກັບໄຂ້ຫວັດໃຫຍ່ແບບທັມມະດາທົ່ວໄປຂອງຄົນ (ເປັນໄຂ້, ໄອ, ເມື່ອຍອ່ອນເພັຍ, ປວດຕາມກ້າມເນື້ອ, ເຈັບຄໍ, ຫັນໃຈຝືດ, ຂີ້ມູກໄຫຼ, ເຈັບຫົວ). ໃນບາງກໍຣະນີ ເຊື້ອໂຣກຊນິດ H5N1 ອາດກໍ່ໃຫ້ເກີດການເປັນໂຣກປອດບວມຢ່າງຮ້າຍແຮງ ແລະໃນກໍຣະນີສ່ວນນ້ອຍ, ຄົນເຈັບອາດ ເປັນໂຣກ ເຍື່ອຫຸ້ມສມອງອັກເສບ ຫຼື ຖອກທ້ອງໄດ້. ອາການທີ່ມັກເກີດຂຶ້ນກັບຄົນທີ່ຕິດເຊື້ອຊນິດ H7 ແມ່ນເປັນໂຣກຕາແດງ (ເຍື່ອຫຸ້ມຕາຂາວອັກເສບ). ຕາມປົກກະຕິ ອາການຕ່າງໆຈະສະແດງອອກໃນ ລະຫວ່າງ ສອງ ຫາສີ່ ມື້ຫຼັງຈາກໄດ້ຮັບເຊື້ອ.

## ແມ່ນໃຜແດ່ທີ່ມີຄວາມສ່ຽງສູງຕໍ່ການຕິດເຊື້ອນີ້?

**ຄົນສ່ວນຫຼາຍບໍ່ມີຄວາມສ່ຽງສູງຕໍ່ການຕິດເຊື້ອ. ຄົນທີ່ມີຄວາມສ່ຽງສູງຕໍ່ການຕິດເຊື້ອ** H5N1 ແມ່ນຜູ້ທີ່ຢູ່ໃກ້ຊິດກັບນົກທີ່ເຈັບປ່ວຍຫຼືອາຈົມຂອງມັນ ໃນລະຫວ່າງທີ່ພັກອາສັຍຢູ່ຫຼືເດີນທາງໄປໃນເຂດທີ່ເຊື້ອໂຣກກຳລັງແຜ່ພາຍໝູນວຽນຢູ່, ຫຼືວ່າ (ແຕ່ວ່າເປັນສ່ວນນ້ອຍ) ຜູ້ທີ່ໃກ້ຊິດກັບຄົນທີ່ມີເຊື້ອໂຣກແບບພຍາດຂອງຄົນຢູ່ໃນຕົວ ແລະ ຢູ່ໃນເຂດທີ່ເຊື້ອກຳລັງແຜ່ພາຍຢູ່.

## ຈະປ້ອງກັນໂຣກນີ້ໄດ້ຢ່າງໃດ?

ການສັກຢາປ້ອງກັນພຍາດໄຂ້ຫວັດນົກໃຫ້ມະນຸດຍັງບໍ່ທັນມີເທື່ອ. ຢາສັກປ້ອງກັນຫວັດຂອງຄົນແບບທັມມະດາ ຊຶ່ງມີຢູ່ໃນປັດຈຸບັນຈະບໍ່ສາມາດປ້ອງກັນໂຣກຈາກໄຂ້ຫວັດນົກໄດ້, ຊຶ່ງຮວມເຖິງເຊື້ອໂຣກ ຊນິດ H5N1 ດ້ວຍ. ປັດຈຸບັນນີ້ ນັກວິທຍາສາດທົ່ວໂລກກຳລັງສຶກສາຄົ້ນຄວ້າ ເພື່ອຜລິດຢາສັກ ປ້ອງກັນ ທີ່ເໝາະສົມ ຕໍ່ໂຣກຊນິດນີ້.

## ຈະກວດຫາພຍາດນີ້ໄດ້ຢ່າງໃດ?

ການກວດຫາໂຣກໄຂ້ຫວັດນົກສາມາດກະທຳໄດ້ໂດຍໃຊ້ຕົວຢ່າງຂອງເລືອດ, ຂີ້ເຖົ່າ ຫຼື ຈາກເນື້ອເຍື່ອໃນດັງ ແລະ ຮູຄໍ. ການວິຈັຍແມ່ນເຮັດທີ່ຫ້ອງທົດລອງພິເສດສະເພາະ.

## ຈະປິ່ນປົວພຍາດນີ້ໄດ້ຢ່າງໃດ?

ຢາຕ້ານເຊື້ອຫວັດຊນິດນີ້ໂດຍສະເພາະອາດໃຊ້ເປັນຜົນໃນການຕໍ່ຕ້ານໂຣກໄຂ້ຫວັດນົກທີ່ເກີດກັບຄົນແລະ ນຳມາໃຊ້ປົວຄົນທີ່ຕິດເຊື້ອພຍາດຊນິດ H5N1 ນີ້.

## ມີການຮັບມືວິທີໃດເພື່ອສຸຂພາບຂອງຊຸມຊົນ?

ການລະບາດຂອງໂຣກໄຂ້ຫວັດນົກຊນິດຕ່າງໆເຄີຍເກີດຂຶ້ນມາກ່ອນໃນອອສເຕຣເລັຍ. ຢ່າງໃດກໍດີ, ຍັງບໍ່ໄດ້ມີລາຍງານວ່າມີໄຂ້ຫວັດນົກຊຶ່ງລະບາດຂຶ້ນຫວ່າງບໍ່ດົນນີ້ ເກີດຂຶ້ນໃນປະເທດອອສເຕຣເລັຍເທື່ອ ແລະ ຍັງບໍ່ໄດ້ມີ ລາຍງານວ່າມີຄົນອອສເຕຣລຽນຕິດເຊື້ອໄວຣັສ H5N1 ນີ້ເທື່ອ. ປະເທດອອສເຕຣເລັຍ ບໍ່ໄດ້ນຳເຂົ້າສັດປີກທີ່ມີຊີວິດ ຫຼື ຜລິຕພັນສັດປີກດິບຈາກປະເທດເອເຊັຍ ແລະໄດ້ມີການກວດຂັນຕາມຊາຍແດນ ຂອງປະເທດ ອອສເຕຣເລັຍ ບໍ່ໃຫ້ມີການນຳເອົານົກຫຼືຜລິຕພັນຈາກນົກເຂົ້າປະເທດໂດຍຜິດກົດໝາຍ.

## ຄຳເຕືອນເຣື່ອງການເດີນທາງ

ຄົນອອສເຕຣລຽນທີ່ເດີນທາງໄປໃນເຂດທີ່ມີໂຣກໄຂ້ຫວັດນົກລະບາດ ສາມາດລົດຜ່ອນການສ່ຽງຕໍ່ການຕິດເຊື້ອໂຣກໄດ້ໂດຍຫຼີກເວັ້ນບໍ່ໄປຟາມລ້ຽງສັດປີກ ແລະ ຕລາດທີ່ຂາຍສັດປີກທີ່ຍັງເປັນ.ເຂົາເຈົ້າຕ້ອງໝັ້ນໃຈວ່າເມື່ອຈັບຕ້ອງສັດປີກທີ່ຍັງເປັນ ຫຼື ຈັບບາຍໄຂ່ຕ້ອງຈັບບາຍໃຫ້ຖືກຫຼັກອະນາມັຍ, ໂດຍການລ້າງມືຫຼັງຈາກຈັບຕ້ອງ ຂອງ ເຫຼົ່ານັ້ນ ແລະ ຕ້ອງໝັ້ນໃຈວ່າສັດປີກນັ້ນໄດ້ປຸງຈົນສຸກດີຢ່າງທົ່ວເຖິງກ່ອນກິນ.

## ສຳລັບຂໍ້ມູນເພີ້ມເຕີມ

Australian Government Department of Health and Ageing information hotline
**1800 004 599.**

## ຂໍ້ມູນເຊື່ອມໂຍງ (Related links)

NSW Health influenza factsheet (usual human influenza)
http://www.health.nsw.gov.au/pubs/topics/Influenza.pdf

Australian Government Department of Health and Ageing – Avian influenza
http://www.health.gov.au/internet/wcms/publishing.nsf/Content/health-avian_influenza-index.htm

World Health Organization
http://www.who.int/csr/disease/avian_influenza/en

Travel Advice (Australian Government Department of Foreign Affairs and Trade)
http://www.smartraveller.gov.au

U.S. Centers for Disease Control and Prevention
http://www.cdc.gov/flu/avian/index.htm

| **ຂໍ້ມູນເພີ້ມເຕີມ – ໜ່ວຍສາທາຣະນະສຸກແຫ່ງຣັດ ນຊວ (Public Health Units in NSW)** | | | | | |
|---|---|---|---|---|---|
| ຖ້າຕ້ອງການຂໍ້ມູນເພີ້ມເຕີມ ກະຣຸນາຕິດຕໍ່ທ່ານໝໍຂອງທ່ານ, ໜ່ວຍສາທາຣະນະສຸກຫຼືສູນອະນາມັຍຊຸມຊົນ ໃນເຂດທ້ອງຖິ່ນຂອງທ່ານ – ໃຫ້ເບິ່ງພາຍໃຕ້ຫົວຂໍ້ NSW Government ຊຶ່ງຢູ່ທາງໜ້າຂອງສມຸດໂທຣະສັບ White Pages. | | | | | |
| ເຂດໃນຕົວເມືອງ Metropolitan Areas | | | ເຂດຊົນນະບົດ Rural Areas | | |
| Northern Sydney / Central Coast | Hornsby | 02 9477 9400 | Greater Southern | Goulburn | 02 4824 1837 |
| | Gosford | 02 4349 4845 | | Albury | 02 6021 4799 |
| South Eastern Sydney / Illawarra | Randwick | 02 9382 8333 | Greater Western | Broken Hill | 08 8080 1499 |
| | Wollongong | 02 4221 6700 | | Dubbo | 02 6841 5569 |
| Sydney South West | Camperdown | 02 9515 9420 | | Bathurst | 02 6339 5601 |
| | Liverpool | 02 9828 5944 | | | |
| Sydney West | Penrith | 02 4734 2022 | Hunter / New England | Newcastle | 02 4924 6477 |
| | Parramatta | 02 9840 3603 | | Tamworth | 02 6767 8630 |
| Justice Health Service | Matraville | 02 9289 2977 | North Coast | Port Macquarie | 02 6588 2750 |
| | | | | Lismore | 02 6620 7500 |
| NSW Department of Health | Nth Sydney | 02 9391 9000 | | | |
| NSW Health website | www.health.nsw.gov.au | | | | © NSW Department of Health 2005 |

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນການໂທຣະສັບເປັນພາສາອັງກິດ, ກະຣຸນາໂທຣຫາຜແນກແປເອກກະສານແລະແປພາສາ (TIS) ທີ່ ເລກໂທຣ 131 450.

ບັນດາເລກໂທຣະສັບແມ່ນຖືກຕ້ອງເມື່ອເວລາເອກກະສານນີ້ພິມອອກ ແຕ່ວ່າບໍ່ໄດ້ມີການກວດເບິ່ງການປ່ຽນແປງຢ່າງຕໍ່ເນື່ອງ. ທ່ານຄວນກວດເບິ່ງເລກໂທຣອີກເທື່ອນຶ່ງ ໃນສມຸດໂທຣະສັບ ເພື່ອຄວາມແນ່ໃຈ.

ທ່ານສາມາດຫາເບິ່ງຂໍ້ມູນເພີ້ມເຕີມເປັນພາສາລາວໄດ້ ທີ່ເວັບໄຊຕ໌ ຂອງ Multicultural Communication ທີ່ http://mhcs.health.nsw.gov.au


Website: http://mhcs.health.nsw.gov.au
e-mail: mhcs@sesiahs.health.nsw.gov.au